ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 4826/ອປຊ
ນະຄອນຫລວງວຽງຈັນ,ວັນທີ 16. 11. 2026

ອົງການປະກັນສັງຄົມແຫ່ງຊາດ

ໜັງສືແຈ້ງເຊີນປະມູນ

1. ອົງການປະກັນສັງຄົມແຫ່ງຊາດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເຫມາະສົມ ເຂົ້າຍື່ນຊອງປະມູນ ສຳລັບສະຫນອງ **ໂຄງການສຶກສາລະບົບບໍລິການ, ຄຸ້ມຄອງຖານຂໍ້ມູນປະກັນສັງຄົມ ແບບທັນສະໄໝ** ສຳລັບການສະຫນອງສິນຄ້າ ແມ່ນຊ້າສຸດບໍ່ໃຫ້ເກີນ 180 ວັນ ພາຍຫລັງຜູ້ຈັດຊື້ອອກເອກະສານສັ່ງຊື້;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະຫນອງເຄື່ອງດັ່ງກ່າວ;
4. ບໍລິສັດໃດສົນໃຈ ສາມາດຊື້ເອກະສານປະມູນຄົບຊຸດໄດ້ທີ່ອົງການປະກັນສັງຄົມແຫ່ງຊາດ (ພະແນກ ທະບຽນ ແລະ ເງິນສົມທົບ) ຊັ້ນ 3 ຕັ້ງຢູ່ບ້ານ: ທົ່ງສາງນາງ, ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ, ເບີໂທ 020 56654549. ຈະເລີ່ມຂາຍຊອງແຕ່ວັນທີ 16 ພະຈິກ 2025 ເປັນຕົ້ນໄປ, ໃນລາຄາ 5,000,000 ກີບ/ຊອງ (ສາມລ້ານກີບຖ້ວນ), ຈຳນວນເງິນດັ່ງກ່າວຈະບໍ່ສົ່ງຄືນຖ້າບໍລິສັດຂອງທ່ານບໍ່ຊະນະການປະມູນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
5. ຊອງປະມູນຕ້ອງສົ່ງກ່ອນເວລາ 9:00 ໂມງ ຂອງວັນທີ 21 ທັນວາ 2026 ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນແມ່ນຈະປິດຮັບ ແລະ ເປີດຊອງໃນເວລາ 09:00 ໂມງຂອງວັນທີ 21 ທັນວາ 2026 ທີ່ຫ້ອງປະຊຸມຊັ້ນ 4 ຂອງອົງການປະກັນສັງຄົມແຫ່ງຊາດ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ ຫລື ໜັງສືຄ້ຳປະກັນອອກໂດຍທະນາຄານ, ແຊັກ ບໍ່ໃຫ້ຫລຸດ 02% (ສອງສ່ວນຮ້ອຍ) ຂອງມູນຄ່າສະເໜີ.

ຮັກສາການ ຫົວໜ້າອົງການ

ບົວຫອມ ພົມມະຈັນ